ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບ້ານໜອງຄັນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 052 /ລອທ

ນະຄອນຫຼວງວຽງຈັນ,ວັນທີ 24 APR 2025.

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ: ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ).

- ອີງຕາມ: ລະບຽບວ່າດວ້ຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ: ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ 575/ຕລຊລ, ລົງວັນທີ 16 ພຶດສະພາ 2024
- ອີງຕາມ: ແຜນການປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈຳປີ 2024 ສະບັບເລກທີ 074/ລອທ, ລົງວັນທີ 17 ພຶດສະພາ 2024

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ໃນປີ 2024. ຜ່ານມາ ບໍລິສັດ ໄດ້ປະຕິບັດຕາມແຜນງົບປະມານທີ່ວາງໄວ້ເພື່ອໃຫ້ສອດຄ່ອງກັບແນວທາງການແກ້ໄຂບັນຫາການຂາດທຶນ. ທາງ ບໍລິສັດ ມີຄວາມຍິນດີເປັນຢ່າງຍິ່ງທີ່ຈະຊີ້ແຈ້ງເຖິງແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໃຫ້ກັບຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ ຕະຫຼາດຫຼັກຊັບລາວ.

❖ ລາຍງານຜົນການດຳເນີນງານປະຈຳປີ 2024

* ຍອດຈຳໜ່າຍນ້ຳມັນປາມດິບ ເປັນຈຳນວນເງິນ 36,223ລ້ານກີບ ເຊິ່ງຕ່ຳກວ່າເປົ້າ 60%, ເນື່ອງຈາກ ວ່າເກີດໄພແລ້ງ, ລາຄາສິນຄ້າ ມີການຜັນຜວນໃນຕະຫຼາດໂລກຢ່າງຮຸນແຮງຈຶ່ງເຮັດໃຫ້ລາຄາຂາຍສິນຄ້າບໍ່ເປັນໄປຕາມເປົ້າທີ່ຕັ້ງໄວ້ ສິ່ງຜົນໃຫ້ລູກຄ້ານຳໃຊ້ວັດຖຸດິບອື່ນແທນນ້ຳມັນປາມດິບ.

* ຍອດຈຳໜ່າຍກາກປາມ ເປັນຈຳນວນເງິນ 3,375ລ້ານກີບ ເຊິ່ງສູງກວ່າເປົ້າທີ່ຕັ້ງໄວ້ 21%, ເນື່ອງຈາກວ່າມີຄວາມຕ້ອງການໃນທ້ອງຕະຫຼາດຫຼາຍ ພຽງແຕ່ໃຊ້ໃນອຸດສາຫະກຳການຜະລິດປຸ໋ຍເທົ່ານັ້ນ, ຍັງສາມາດໃຊ້ໄດ້ກັບອຸດສາຫະກຳການລ້ຽງສັດໄດ້ນຳອີກ.

* ຍອດຈຳໜ່າຍປຸ໋ຍໄດ້ ເປັນຈຳນວນເງິນ 1,311ລ້ານກີບ ເຊິ່ງຫຼຸດເປົ້າທີ່ຕັ້ງໄວ້ 39%. ເນື່ອງຈາກວ່າພົບບັນຫາເກີດການແຫ້ງແລ້ງ, ຂາດແຄ້ນນ້ຳ ຈຶ່ງບໍ່ສາມາດຂາຍໄດ້ຕາມເປົ້າ, ຍອດຂາຍຕົ້ນກ້າ ເປັນຈຳນວນເງິນ 567ລ້ານກີບ ເຊິ່ງຫຼຸດເປົ້າທີ່ຕັ້ງໄວ້ 13%. ເນື່ອງຈາກວ່າຫາງ ບໍລິສັດ ຍັງຜັກດັນການນຳສົ່ງອອກຍັງບໍ່ສຳເລັດ. ຈຶ່ງເຮັດໃຫ້ຍອດຂາຍບໍ່ເປັນໄປຕາມເປົ້າ ແຕ່ຢ່າງໃດກໍຕາມ ບໍລິສັດ ກໍບໍ່ນິ່ງນອນໃຈຕໍ່ກັບສະພາບທີ່ເກີດຂຶ້ນແຕ່ຢ່າງໃດ ບໍລິສັດ ຈະຍັງສືບຕໍ່ຜັກດັນ ແລະ ສົ່ງເສີມໃຫ້ມີການປຸກພາຍໃນປະເທດ ແລະ ສົ່ງອອກນອກປະເທດຕໍ່ໄປ.

❖ ງົບປະມານການຈຳໜ່າຍ ຂາຍສິນຄ້າ ແລະ ການບໍລິການ ປີ 2025

ໃນປີ 2025 ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຕັ້ງເປົ້າງົບປະມານໃນການຈຳໜ່າຍຂາຍສິນຄ້າ ແລະ ການບໍລິການໄວ້ດັ່ງນີ້:

* ນ້ຳມັນປາມດິບຈະຕ້ອງມີລາຍຮັບ 60,000ລ້ານກີບ.
* ການປາມ 6,000ລ້ານກີບ.
* ປຸ໋ຍ 3,600ລ້ານກີບ.
* ຕົ້ນກ້າປາມ 1,750ລ້ານກີບ.

❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ

- ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດບວກກັບຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025
- ແຜນການຂາຍປຸ໋ຍ ໃນປີ 2025 ບໍລິສັດໄດ້ສົ່ງເສີມຊາວກະສິກອນທີ່ເອັດກະສິກຳອື່ນໆ ເຊັ່ນ: ເຂົ້າ, ມັນຕົ້ນ, ຢາງພາລາ, ແລະອື່ນໆເພື່ອເພີ່ມຍອດຂາຍ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2025.
- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິຈານແລະນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ
- ຍິ່ງໄປກວ່ານັ້ນ, ບໍລິສັດ ໄດ້ຄົ້ນຄວ້າຫາເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດຕໍ່ໆໄປ.

ດັ່ງນັ້ນ, ຈຶ່ງເຮັດແຜນປັບປຸງສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ຜູ້ອຳນວຍການໃຫ່ຍ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ